ສໍານັກງານອົງການປົກຄອງ ນວ
ຂາເຂົ້າ
ໜ່ວຍງານບໍລິການປະຕູດຽວ
ເລກທີ: 5095
ວັນທີ: 8. 11. 2024

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນະຄອນຫລວງວຽງຈັນ
ພະແນກຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ

ເລກທີ 10780/ພຊສ.ນວ
ລົງວັນທີ 07. 11. 2024

# ບົດລາຍງານ

**ຮຽນ: ທ່ານ ພູວົງ ວົງຄໍາຊາວ ຮອງເຈົ້າຄອງນະຄອນຫຼວງວຽງຈັນ ທີ່ນັບຖືຢ່າງສູງ.**

**ເລື່ອງ: ຂໍລາຍງານກ່ຽວກັບການຜັນຂະຫຍາຍການຈັດຕັ້ງປະຕິບັດແຈ້ງການຂອງຫ້ອງວ່າການນະຄອນຫຼວງວຽງຈັນ ສະບັບເລກທີ 45/ຫວນວ, ລົງວັນທີ 25 ຕຸລາ 2024 ຕອນດິນຂອງທ່ານ ພອນປະເສີດ ອິນທະສອນ ທີ່ຕັ້ງຢູ່ບ້ານນາຄວາຍໃຕ້ ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ.**

- ອີງຕາມ ຂໍ້ຕົກລົງຂອງທ່ານເຈົ້າຄອງນະຄອນຫຼວງວຽງຈັນ ສະບັບເລກທີ 1097/ຈນວ, ລົງວັນທີ 21 ທັນວາ 2022, ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ ຂອງພະແນກຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ແຂວງ ແລະ ນະຄອນຫລວງວຽງຈັນ;
- ອີງຕາມ ແຈ້ງການຂອງ ຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ສະບັບເລກທີ 986/ຫສນຍ, ລົງວັນທີ 16/9/2020.
- ອີງຕາມ ຂໍ້ຕົກລົງຂອງທ່ານເຈົ້າຄອງ ນະຄອນຫຼວງວຽງຈັນ ສະບັບເລກທີ 110/ຈນວ, ລົງວັນທີ 23/2/2021 ວ່າດ້ວຍການຮັບຮອງເອົາເຂດພັດທະນາໂຄງການທ່າບົກທ່ານາແລ້ງ ແລະ ເຂດໂລຊິດສຕິກ ນະຄອນຫຼວງວຽງຈັນ ຂອງບໍລິສັດສິດທິ ໂລຈິດສຕິກ ລາວຈໍາກັດຢູ່ບ້ານຊຽງດາ, ບ້ານນາຄວາຍໃຕ້ ເມືອງໄຊເສດຖາ ແລະ ບ້ານດົງໂພສີ ໃນເນື້ອທີ່ 327 ເຮັກຕາ.
- ອີງຕາມ ແຈ້ງການຂອງຫ້ອງການ ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ສະບັບເລກທີ 2177/ກຊສ.ຫກ, ລົງວັນທີ 17 ພຶດສະພາ 2021
- ອີງຕາມ ໜັງສືທາງລັດຖະການຂອງຫ້ອງວ່າການ ນະຄອນຫຼວງວຽງຈັນ ສະບັບເລກທີ 31/ຫວນວ, ລົງວັນທີ 21 ພຶດສະພາ 2021
- ອີງຕາມ ແຈ້ງການຂອງຫ້ອງວ່າການນະຄອນຫຼວງວຽງຈັນ ສະບັບເລກທີ 45/ຫວນວ, ລົງວັນທີ 25 ຕຸລາ 2024
- ອີງຕາມ ບົດບັນທຶກກອງປະຊຸມການຜັນຂະຫຍາຍແຈ້ງການຂອງຫ້ອງວ່າການນະຄອນຫຼວງວຽງຈັນ ຄັ້ງວັນທີ 30 ຕຸລາ 2024.
- ອີງຕາມ ບົດລາຍງານຂອງຂະແໜງທີ່ດິນ ສະບັບເລກທີ 1495/ຂທດ, ລົງວັນທີ 07. 11. 2024

**ພະແນກຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ ຂໍຖືເປັນກຽດຮຽນລາຍງານມາຍັງທ່ານຊາບລາຍລະອຽດມີດັ່ງລຸ່ມນີ້:**

## I. ສະພາບລວມ.

ໂຄງການທ່າບົກ-ທ່ານາແລ້ງ ແລະ ເຂດໂລຊິດສຕິກ ນະຄອນຫຼວງວຽງຈັນ (ແບບຄົບວົງຈອນ) ແມ່ນໂຄງການບູລິມະສິດຂອງລັດຖະບານບົນພື້ນຖານເພື່ອຜັນຂະຫຍາຍແຜນຍຸດທະສາດໂລຈິດສະຕິກແຫ່ງຊາດ ປີ 2016-2020 ຂອງລັດຖະບານ ເພື່ອໃຫ້ຮອງຮັບການຂົນສົ່ງຫຼາຍຮູບແບບທາງບົກ, ທາງນໍ້າ ແລະ ທາງອາກາດ ແນໃສ່ບັນລຸຕາມ

ຈຸດປະສົງ ໃຫ້ນະໂຍບາຍເຊື່ອມໂຍງກັບພາກພື້ນ ແລະ ສາກົນກໍ່ຄືການພັດທະນາໂຄງລ່າງລະບົບທ່າບົກ ຂົນສົ່ງສິນຄ້າ ແລະ ການບໍລິການຂົນສົ່ງສິນຄ້າທີ່ທັນສະໄໝໄດ້ມາດຕະຖານສາກົນ ເພື່ອເປັນຈຸດເຊື່ອມຕໍ່ການຂົນສົ່ງທັງ ເປັນການ ຫຼຸດຜ່ອນຕົ້ນທຶນການຂົນສົ່ງໃຫ້ສາມາດແຂ່ງຂັນໄດ້, ວ່ອງໄວ, ໂປ່ງໃສ ແລະ ມີປະສິດທິພາບ.

ພື້ນທີ່ໂຄງການດັ່ງກ່າວແມ່ນນອນໃນຂອບເຂດປ່າສະຫງວນດົງໂພສີ ເຊິ່ງມີເນື້ອທີ່ລວມທັງໝົດເນື້ອທີ່ 1.860 ເຮັກຕາ ເຊິ່ງກວມເອົາ 2 ເມືອງ: ເມືອງໄຊເສດຖາມີ 2 ບ້ານ: ບ້ານຊຽງດາ, ບ້ານນາຄວາຍໃຕ້ ແລະ ເມືອງຫາດຊາຍ ຟອງມີ 1 ບ້ານ: ບ້ານດົງໂພສີ, ໂຄງການນີ້ເປັນຈຸດເຊື່ອມຕໍ່ຈາກດ້ານຂ້າງຂອງສາງCY ມີເນື້ອທີ່ 327 ເຮັກຕາ.

## II. ການຈັດຕັ້ງປະຕິບັດ.

ເພື່ອຜັນຂະຫຍາຍແຈ້ງການຂອງຫ້ອງວ່າການ ນະຄອນຫຼວງວຽງຈັນ ສະບັບເລກທີ 45/ຫວນວ, ລົງວັນທີ 25 ຕຸລາ 2024 ພະແນກຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ໄດ້ຈັດກອງປະຊຸມຮ່ວມກັບພາກສ່ວນກ່ຽວຂ້ອງເພື່ອ ຮັບຊາບນິຕິກໍາຂອງຂັ້ນເທິງມອບໝາຍໃຫ້ ກອງປະຊຸມໄດ້ປຶກສາຫາລືແລກປ່ຽນເປັນເອກະພາບກັນເພື່ອບໍ່ໃຫ້ມີຂໍ້ຂັດແຍ່ງ, ໃຫ້ມີຄວາມສະຫງົບ, ພາກສ່ວນກ່ຽວຂ້ອງທີ່ເຂົ້າຮ່ວມກອງປະຊຸມເປັນຕົ້ນ: ສະພາປະຊາຊົນ ນະຄອນຫຼວງວຽງຈັນ ໄດ້ມີຂໍ້ ສະເໜີໃຫ້ຜັນຂະຫຍາຍໜັງສືທາງລັດຖະການຂອງ ຄະນະປະຈໍາສະພາປະຊາຊົນ ນະຄອນຫຼວງວຽງຈັນ ສະບັບເລກທີ 112/ ຄປຈ.ສປນວ, ລົງວັນທີ 27 ກັນຍາ 2024 ເປັນບ່ອນອີງໃນການຈັດຕັ້ງປະຕິບັດ, ໃນກອງປະຊຸມທາງບໍລິສັດ ສົດທີໂລ ຈິດສຕິກລາວ ຈໍາກັດ ຜູ້ພັດທະນາໂຄງການທ່າບົກທ່ານາແລ້ງເຂດໂລຈິດສຕິກ ບໍ່ເຫັນດີໃຫ້ອອກໃບຕາດິນໃຫ້ທ່ານ ພອນ ປະເສີດ ອິນທະສອນ ເນື້ອທີ່ 29.000 ຕາແມັດ ທີ່ຖືກໂຄງການທ່າບົກທ່ານາແລ້ງ ແລະ ເຂດໂລຈິດສະຕິກສ່ວນໜຶ່ງ ຍ້ອນ ວ່າ ບໍລິສັດໄດ້ມີສັນຍາເຊົ່າສໍາປະທານ ໃນເນື້ອທີ່ 327 ເຮັກຕາ, ໄດ້ມີແຈ້ງການຂອງຫ້ອງວ່າການສໍານັກງານນາຍົກລັດຖະ ມົນຕີ ແລະ ກົມທີ່ດິນ ກະຊວງຊັບພະຍາກອນທໍາມະ ຊາດ ແລະ ສິ່ງແວດລ້ອມໄດ້ອອກໃບຢັ້ງຢືນການສໍາຫຼວດ-ວັດແທກ ເນື້ອທີ່ດິນໃນເນື້ອທີ່ 327 ເຮັກຕາ ໃຫ້ພັດທະນາຕາມສັນຍາເຊົ່າ ແລະ ສໍາປະທານໄດ້ລະບຸໄວ້, ປະຈຸບັນທາງໂຄງການໄດ້ ອອກແບບແຜນຜັງລວມ, ຜ່ານບົດປະເມີນສຶກສາຜົນກະທົບຕໍ່ສິ່ງແວດລ້ອມ-ສັງຄົມຢັ້ງຢືນຈາກກະຊວງຊັບພະຍາກອນທໍາ ມະຊາດ ແລະ ສິ່ງແວດລ້ອມແລ້ວ, ຖ້າຈະແກ້ໄຂສະເພາະໃຫ້ທ່ານ ພອນປະເສີດ ອິນທະສອນ ຈະໄດ້ດັດແປງນິຕິກໍາຄືນໃໝ່ ແລະ ເຮັດໃຫ້ເຈົ້າຂອງສິດນໍາໃຊ້ທີ່ດິນຈໍານວນ 16 ກໍລະນີທີ່ບໍ່ຍອມຮັບເອົາຄ່າທົດແທນ ກອງປະຊຸມສະເໜີໃຫ້ບໍລິສັດ ສົດທີໂລຈິດສຕິກລາວ ຈໍາກັດ ລາຍງານຕໍ່ທ່ານປະທານບໍລິສັດ ຮີບຮ້ອນຊອກຫາກົນໄກໃນການຈ່າຍຄ່າທົດແທນຄ່າເສຍ ຫາຍໃຫ້ທ່ານ ພອນປະເສີດ ອິນທະສອນ.

## III. ທັດສະນະ ແລະ ພາກສະເໜີ.

1. ພາຍຫຼັງພະແນກຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ ໄດ້ຮັບແຈ້ງການຂອງຫ້ອງວ່າການ ນະຄອນຫຼວງວຽງຈັນ ສະບັບເລກທີ 45/ຫວນວ, ລົງວັນທີ 25 ຕຸລາ 2024 ເພື່ອເຮັດໃຫ້ການຜັນຂະຫຍາຍແຈ້ງການດັ່ງກ່າວ ພະແນກຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ ຈຶ່ງໄດ້ຈັດກອງປະຊຸມ ໂດຍເຊີນເອົາພາກສ່ວນ ກ່ຽວຂ້ອງມາຄົ້ນຄວ້າປຶກສາຫາລືໃນການຈັດຕັ້ງປະຕິບັດ, ກອງປະຊຸມໄດ້ແລກປ່ຽນຊອກຫາກົນໄກໃນການແກ້ໄຂ ໃຫ້ມີ ຄວາມເປັນທໍາ ແລະ ສອດຄ່ອງກັບກົດໝາຍ ແລະ ລະບຽບການ, ພາກສ່ວນກ່ຽວຂ້ອງທີ່ເຂົ້າຮ່ວມກອງປະຊຸມເປັນຕົ້ນ: ສະພາປະຊາຊົນ ນະຄອນຫຼວງວຽງຈັນ ໄດ້ສະເໜີໃຫ້ຜັນຂະຫຍາຍເນື້ອໃນໜັງສືທາງລັດຖະການຂອງ ຄະນະປະຈໍາສະພາ ປະຊາຊົນ ນະຄອນຫຼວງວຽງຈັນ ສະບັບເລກທີ 112/ຄປຈ.ສປນວ, ລົງວັນທີ 27 ກັນຍາ 2024 ເປັນບ່ອນອີງໃນການ ຈັດຕັ້ງປະຕິບັດ, ໃນກອງປະຊຸມທາງບໍລິສັດ ສົດທີໂລຈິດສຕິກລາວ ຈໍາກັດ ຜູ້ພັດທະນາໂຄງການທ່າບົກທ່ານາແລ້ງເຂດໂລ ຈິດສຕິກ ບໍ່ເຫັນດີໃຫ້ອອກໃບຕາດິນໃຫ້ທ່ານ ພອນປະເສີດ ອິນທະສອນ ເນື້ອທີ່ 29.000 ຕາແມັດ ທີ່ຖືກໂຄງການທ່າ ບົກທ່ານາແລ້ງ ແລະ ເຂດໂລຈິດສະຕິກສ່ວນໜຶ່ງ ຍ້ອນວ່າ ບໍລິສັດໄດ້ມີສັນຍາເຊົ່າສໍາປະທານ ໃນເນື້ອທີ່ 327 ເຮັກຕາ, ໄດ້ມີແຈ້ງການຂອງຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ແລະ ກົມທີ່ດິນ ກະຊວງຊັບພະຍາກອນທໍາມະ ຊາດ ແລະ ສິ່ງແວດລ້ອມໄດ້ອອກໃບຢັ້ງຢືນການສໍາຫຼວດ-ວັດແທກເນື້ອທີ່ດິນໃນເນື້ອທີ່ 327 ເຮັກຕາ ໃຫ້ພັດທະນາຕາມສັນຍາເຊົ່າ

ແລະ ສຳປະທານໄດ້ລະບຸໄວ້, ປະຈຸບັນທາງໂຄງການໄດ້ອອກແບບແຜນຜັງລວມ, ຜ່ານບົດປະເມີນສຶກສາຜົນກະທົບຕໍ່ສິ່ງແວດລ້ອມ-ສັງຄົມຢັ້ງຢືນຈາກກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແລ້ວ, ຖ້າຈະແກ້ໄຂສະເພາະໃຫ້ທ່ານ ພອນປະເສີດ ອິນທະສອນ ຈະໄດ້ດັດແປງນິຕິກຳຄືນໃໝ່ ແລະ ເຮັດໃຫ້ເຈົ້າຂອງສິດນຳໃຊ້ທີ່ດິນຈຳນວນ 16 ກໍລະນີທີ່ບໍ່ຍອມຮັບເອົາຄ່າທົດແທນຢູ່ໃນຂອບເຂດບໍລິເວນດັ່ງກ່າວ, ກອງປະຊຸມສະເໜີໃຫ້ບໍລິສັດສິດທິໂລຈິດສຕິກລາວ ຈຳກັດ ລາຍງານຕໍ່ທ່ານປະທານບໍລິສັດ ຮີບຮ້ອນຊອກຫາກົນໄກໃນການຈ່າຍຄ່າທົດແທນຄ່າເສຍຫາຍໃຫ້ທ່ານ ພອນປະເສີດ ອິນທະສອນ, ສະນັ້ນ ຈຶ່ງຮຽນສະເໜີຂໍທິດຊີ້ນຳຈາກທ່ານເຈົ້າຄອງນະຄອນຫຼວງວຽງຈັນຕື່ມ.

2. ສຳລັບຕອນດິນຕອນທີ2 ຕາມໃບຕາດິນເລກທີ 1383 ລົງວັນທີ 25 ກໍລະກົດ 2018 ມີເນື້ອທີ່ 23,053 ຕາແມັດ ຕັ້ງຢູ່ບ້ານຊຽງດາ ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ ອອກຊື່ ທ້າວ ພອນປະເສີດ ອິນທະສອນ ຖືກຂອບເຂດຂອງໂຄງການທ່າບົກທ່ານາແລ້ງ ເຂດໂລຈິດສຕິກສ່ວນໜຶ່ງເນື້ອທີ່ 11,568 ຕາແມັດ, ຜ່ານມາຜູ້ກ່ຽວໄດ້ນຳເອົາໃບຕາດິນຕອນດັ່ງກ່າວໄປຈຳນອງຄ້ຳປະກັນກັບທະນາຄານແລ້ວ.

ດັ່ງນັ້ນ, ຈຶ່ງຮຽນລາຍງານມາຍັງທ່ານເພື່ອຊາບ ແລະ ນຳສະເໜີຂໍທິດຊີ້ນຳຈາກຂັ້ນເທິງໃນການຈັດຕັ້ງປະຕິບັດ.

ຫົວໜ້າພະແນກ

ພະແນກ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ

ບຸນຊົມ ຊົງວິໄລ